## ບົດຮຽນທີ 4 - <u>ພຣະວິນຍານບໍລິສຸດ</u>

<u>ພະລັງ ຫລື ບຸກຄົນໃດໜຶ່ງ?</u>
ບຸກຄົນທີສາມຂອງພຣະເຈົ້າຄື ພຣະວິນຍານບໍລິສຸດ. ເຖີງຢ່າງໃດກໍຕາມ, ມີບາງສາສະໜາສອນວ່າ ພຣະວິນຍານບໍລິສຸດແມ່ນພຣະລັງອຳນາດ ຫລື ອິດທິພົນຫຼາຍກວ່າບຸກຄົນທີ່ມີຊີວິດຢູ່. ຈົ່ງສຶກສາພິສູດຫຼັກຖານດັ່ງຕໍ່ໄປນີ້ຢ່າງລະມັດລະວັງວ່າ ພຣະວິນຍານບໍລິສຸດແມ່ນບຸກຄົນ (ບໍ່ພຽງແຕ່ລິດອຳນາດ ຫລື ພະລັງເທົ່ານັ້ນ) ແລະ ເປັນພຣະເຈົ້າ:

ຄຳແທນນາມທີ່ຖືກໃຊ້ສຳລັບພຣະວິນຍານບໍລິສຸດ
ໂຢຮັນ 14:26 ແລະ ໂຢຮັນ 16:13 ແມ່ນຄຳວ່າ "ພຣະອົງ"

<u>ພຣະວິນຍານບໍລິສຸດເອີ້ນວ່າ "ຜູ້ເລົ້າໂລມ"</u>
"ແຕ່ພຣະຜູ້ເລົ້າໂລມຄືພຣະວິນຍານບໍຣິສຸດເຈົ້າ ... " (ໂຢຮັນ 14:26). ເບິ່ງອີກໃນ ໂຢຮັນ 14:16 ແລະ ໂຢຮັນ 15:26. ພະລັງບໍ່ສາມາດເລົ້າໂລມ, ມີພຽງແຕ່ບຸກຄົນເທົ່ານັ້ນທີ່ສາມາດເຮັດສິ່ງນີ້ໄດ້.

<u>ພຣະວິນຍານບໍລິສຸດຊົງມີຄວາມຮູ້</u>
ໃນ 1 ໂກລິນໂທ 2:11 ແລະ ຂໍ້ອື່ນໆ, ພວກເຮົາພົບວ່າ ພຣະວິນຍານບໍລິສຸດຊົງຮອບຮູ້ “ທຸກສິ່ງ ກ່ຽວກັບພຣະເຈົ້າ” ພະລັງບໍ່ສາມາດຮູ້ຈັກທຸກຢ່າງໄດ້.

ພຣະວິນຍານເຮັດສິ່ງທີ່ມະນຸດຄົນໜຶ່ງສາມາດເຮັດ ໄດ້
ພຣະວິນຍານບໍລິສຸດສັ່ງສອນ (ໂຢຮັນ 14:26), ຕິຕຽນ (ໂຢຮັນ 16: 8), ນຳພາ (ໂຢຮັນ 16:13), ກ່າວ (ກິດຈະການ 13: 2), ແລະ ອ້ອນວອນ (ໂຣມ 8:26).

ພຣະວິນຍານບໍລິສຸດມີລັກສະນະຂອງຄວາມເປັນບຸກຄົນ
ພຣະອົງຖືກຕົວະ (ກິດຈະການ 5: 3), ເສຍພຣະໄທ (ເອເຟໂຊ 4: 30), ແລະ ດູໝິ່ນ (ມັດທາຍ 12:31).

<u>ພຣະອົງຊົງເປັນນິລັນດອນ</u>
“ຫລາຍກວ່ານັ້ນຈັກພຽງໃດ ພຣະໂລຫິດຂອງພຣະຄຣິດ ຜູ້ໄດ້ຊົງຖວາຍພຣະອົງເອງແດ່ພຣະເຈົ້າ. . . ” (ເຮັບເຣີ 9:14).

<u>ພຣະອົງຊົງຮອບຮູ້ (ຮູ້ທຸກຢ່າງ)</u>
ພຣະວິນຍານບໍລິສຸດຊົງຮູ້ "ຄວາມເລິກລັບຂອງພຣະເຈົ້າ" (1 ໂກຣິນໂທ 2: 10-1111). ພຣະເຢຊູຄຣິດ
ໄດ້ບອກພວກລູກສິດຂອງພຣະອົງວ່າ ພຣະວິນຍານບໍລິສຸດ "ຈະສັ່ງສອນພວກເຈົ້າທຸກສິ່ງ" (ໂຢຮັນ 14:26).

<u>ພຣະອົງຊົງເປັນຜູ້ມີອຳນາດສູງສຸດ</u> (ມີອຳນາດບໍ່ຈຳກັດ)
ພຣະວິນຍານບໍລິສຸດມີ “ອຳນາດຂອງຜູ້ສູງສຸດ” ອີງຕາມລູກາ 1:35.

<u>ພຣະອົງຄືຜູ້ຢູ່ທົ່ວທຸກແຫ່ງຫົນ</u> (ຢູ່ທຸກບ່ອນໃນເວລາດຽວກັນ)

ເພງສັນລະເສີນ 139: 7-10 ສອນວ່າ ບໍ່ວ່າທ່ານຈະໄປສະຫວັນ ຫລືລົງນະລົກ ຫລືບ່ອນເລິກທີ່ສຸດຂອງທະເລ, ພຣະວິນຍານບໍລິສຸດກໍຈະຢູ່ທີ່ນັ້ນ. "ຂ້ານ້ອຍຈະປົບໜີໄປຈາກວິນຍານຂອງພຣະອົງໄປໄດ້ຢ່າງໃດ? ຫຼືຈະໜີໄປໃສເພື່ອຫຼີກຈາກສາຍຕາຂອງພຣະອົງ?" (ຂໍ້ 7)

<u>ພຣະອົງຊົງຖືກເອີ້ນວ່າພຣະເຈົ້າ</u>

ໃນພຣະທຳ ກິດຈະການ 5: 3 ເປໂຕກ່າວຫາອານາເນຍວ່າ ຕົວະຕໍ່ "ພຣະວິນຍານບໍລິສຸດ" ແລະໃນຂໍ້ທີສີ່ເວົ້າວ່າ ອານາເນຍບໍ່ໄດ້ "ຕົວະມະນຸດ, ແຕ່ຕົວະພຣະເຈົ້າ." "ບັດນີ້ອົງພຣະຜູ້ເປັນເຈົ້ານັ້ນຄືພຣະວິນຍານ.........."
(2 ໂກລິນໂທ 3:17).

## ຄຳຖາມທົບທວນບົດຮຽນທີ 4 - ພຣະວິນຍານບໍລິສຸດ

ຖືກ ຫຼື ຜິດ

1. ພຣະພາກທີສາມຂອງພຣະເຈົ້າຄືພຣະວິນຍານບໍລິສຸດ.
2. ຄຳວ່າ "ຜູ້ເລົ້າໂລມ" ພິສູດໃຫ້ເຫັນວ່າ ພຣະວິນຍານບໍລິສຸດເປັນພະລັງ.
3. ພຣະວິນຍານບໍລິສຸດສອນ ແລະ ກ່າວ.
4. ພຣະວິນຍານບໍລິສຸດໄດ້ສະເດັດມາເມື່ອພຣະເຈົ້າສ້າງອາດາມ ແລະ ເອວາ.

ຄຳຖາມແບບປາລະໄນ

5. ຄຳວ່າ " ພຣະອົງຊົງເປັນຜູ້ມີອຳນາດສູງສຸດ " ໝາຍຄວາມວ່າ:

ກ. ຮູ້ທຸກຢ່າງ

ຂ. ສາມາດຢູ່ໃນທຸກແຫ່ງຫົນໃນເວລາດຽວກັນ

ຄ. ບໍ່ເຄີຍປ່ຽນແປງ

ງ. ມີອຳນາດບໍ່ຈຳກັດ

6. ພຣະວິນຍານບໍລິສຸດຊົງຖືກເອີ້ນວ່າ:

ກ. ພຣະເຈົ້າ

ຂ. ພະລັງ

ຄ. ອຳນາດ

ງ. ພຣະບຸດຂອງພຣະເຈົ້າ

7. ພຣະຄຳພີກ່າວເຖິງພຣະວິນຍານບໍລິສຸດວ່າ "ພຣະອົງ" ສິ່ງນີ້ພິສູດວ່າ ພຣະວິນຍານບໍລິສຸດແມ່ນ:

ກ. ອິດທິພົນ

ຂ. ມະນຸດ

ຄ. ບຸກຄົນ

ງ. ພຣະເຈົ້າ

ຕື່ມໃສ່ຊ່ອງຫວ່າງ

8. "ບໍ່ມີມະນຸດຜູ້ໃດຮູ້ຈັກພຣະເຈົ້າ, ແຕ່ແມ່ນ______________ພຣະເຈົ້າເທົ່ານັ້ນ" (1 ໂກລິນໂທ 2:11).

9. ອານາເນຍ____________ ຕໍ່ພຣະວິນຍານບໍລິສຸດ.

10. _______________________ ໝາຍຄວາມວ່າ ຮູ້ທຸກຢ່າງ

ການສຶກສາຕໍ່ໄປ

ກິດຈະການ 10:38, ໂລມ 15:13,
ປະຖົມມະການ 1:2, ກິດຈະການ 33: 4,
ເພງສັນລະເສີນ 104:30, ມັດທາຍ 28:19,
2ໂກລິນໂທ 13:14
ໂຢຮັນ 15:26, ໂຢຮັນ 16:14,
1ໂກລິນໂທ 6:11
ລູກາ 3: 21-22, ມັດທາຍ 28:19,
ໂຢຮັນ 14:16